# ການປູກ ຫວາຍນ້ຳເຜີ້ງ

**<u>ຄຸນປະໂຫຍດ</u>**

- ນຳໃຊ້ເສັ້ນເຂົ້າໃນການເຮັດຫັດຖະກຳຈັກສານ
- ເພື່ອນຳໃຊ້ຍອດ ຕັດບໍລິໂພກ, ຂາຍຍ່ອຍ
  ຫຼື ປຸງແຕ່ງໃຫ້ແຫ້ງເກັບຮັກສາ ແລະ ສົ່ງຂາຍ.




## 1. ປັດໃຈທີ່ຄວນເລືອກ

- ເນື້ອທີ່ການປູກຢູ່ກາງແຈ້ງສຳລັບຫວາຍເພື່ອເອົາຍອດ
- ເນື້ອທີ່ກ້ອງຮົ່ມໄມ້ສຳລັບຫວາຍເພື່ອຕັດເສັ້ນ
- ລັກສະນະດິນຂ້ອນຂ້າງອຸດົມສົມບູນດີມີນ້ຳຖ້ວມຍິ່ງດີ

## 2. ເຕັກນິກການປູກ

**<u>ແນວພັນ ແລະ ລະດູການ</u>:**

- ກະກຽມແນວພັນໃຫ້ໄດ້ 9 — 12 ເດືອນ
- ລະດູການທີ່ເໝາະສົມ ເດືອນ 5 (ພຶດສະພາ)

**<u>ໄລຍະຫ່າງການປູກ:</u>**

- ໄລຍະຫ່າງຂອງຂຸມປູກ 2X3 ແມັດ.

**<u>ການຂຸດຂຸມ ແລະ ປູກ:</u>**

- ຂຸມປູກຂະໜາດ30X30X30ຊມ (ກວ້າງ,ຍາວ,ເລິກ)
- ໃສ່ຝຸ່ນຄອກຮອງກົ້ນຂຸມ 0,5 ກກ / ຂຸມ

ພາຍຫຼັງປູກແລ້ວຖົມດິນໃຫ້ແໜ້ນແລ້ວຫົດນ້ຳ 2 ຄັ້ງຕໍ່ອາທິດ (ຖ້າຝົນບໍ່ຕົກ)
ພື້ນທີ່ປູກທີ່ເໝາະສົມແຕ່ພາກກາງຈົນເຖິງພາກໄຕ້. ຫວາຍຊະນິດນີ້ ຈະເກີດຢູ່ໃນເນື້ອທີ່ຈຳກັດເຊິ່ງພົບເຫັນຢູ່ແຂວງອັດຕະປືຂອງປະເທດລາວ(ແຄມນ້ຳ)ເຊຂະໜານ ແລະ ຢູ່ໃນໂຄງການ ອາຊຽນ — ອີຢູ ຫວາຍຊະນິດນີ້ເຫັນວ່າເຕີບໂຕດີ.

**<u>ການບົວລະບັດຮັກສາ:</u>**

ຫຼັງຈາກປູກໄດ້ 3 ເດືອນໃຫ້ເອົາຝຸ່ນຄອກໃສ່ ໃນອັດຕາສ່ວນ 1 ກກ / ຕົ້ນ ຫຼື ຝຸ່ນວິທະຍາສາດໃສ່ອີກ 1 ຄັ້ງໃນອັດຕາສ່ວນ 200 ກຼາມ / ຕົ້ນ (ສູດ15— 15 —15 ຫຼື 18— 64— 00) ພ້ອມທັງການເສຍຫຍ້າ.

## 3. ສະພາບສວນປູກຫວາຍ

ຄອບຄົວ ຫຼື ເປັນພື້ນທີ່ກວ້າງລະດັບທຸລະກິດໂດຍບໍ່ຕ້ອງໃຊ້ແຮງງານຫຼາຍ, ເປັນການລົງທຶນໜ້ອຍສາມາດເກັບກູ້ຜົນຜະລິດໄດ້ຫຼາຍຍ້ອນຫວາຍຊະນິດນີ້ໃຫຍ່, ລາຄາແພງສ້າງລາຍຮັບໄດ້ຫຼາຍປີ. ເຊິ່ງສາມາດປູກດ່ຽວ ຫຼື ປູກປະສົມກັບພືດອື່ນໆໄດ້ເນື້ອທີ່ 1 ໄລ່ຂຶ້ນໄປ (ເຊິ່ງໃຊ້ເບ້ຍປູກປະມານ 260 ເບ້ຍ /1ໄລ່, ໄລຍະຫ່າງທີ່ເໝາະສົມ 2X3 ມ ການຮັກສາລຳຫວາຍເພື່ອຕັດເສັ້ນນັ້ນ ແຕ່ລະປີຈະຕ້ອງໄດ້ອະນາໄມ ແລະ ໃສ່ຝຸ່ນຢ່າງໜ້ອຍ 1 ຄັ້ງ/ ປີ




ໃຫ້ເລືອກຕັດລຳທີ່ມີເສັ້ນຍາວກວ່າ 10 ມ ຫຼື ອາຍຸປະມານ 5 ປີຂຶ້ນໄປ. ຫາກມີການດູແລດີຫຼັງຈາກປູກໄດ້ 6 ເດືອນຈະເລີ້ມອອກດອກ ແລະ ຈະອອກໝາກຫຼັງຈາກ 2 ເດືອນຕໍ່ມາ.

ຫວາຍຊະນິດນີ້ສາມາດຕັດຍອດເພື່ອບໍລິໂພກ ຫຼື ຮັກສາໄວ້ຂາຍເສັ້ນໄດ້ໝາຍວ່າ ໃນເວລາ 8 — 12 ເດືອນຈະຕັດຍອດອອກໄດ້ປະມານ 2 — 3 ຍອດ / ສຸມ ຫຼື ໄດ້ຫຼາຍກວ່າ ຖ້າຫາກມີຄວາມຊຸ່ມ ຫຼື ຝຸ່ນພຽງພໍ.

## 4. ວິທີການຕັດຍອດຂາຍ

- ຄວນເລືອກຕັດລຳເດີມທີ່ນຳມາປູກນັ້ນເສຍກ່ອນຍ້ອນມັນຈະເປັນລຳອາຍຸແກ່ກ່ອນໝູ່ ຖ້າເຫັນວ່າລຳຕົ້ນເດີມໄດ້ເກີດໜໍ່ແລ້ວ.
- ຄັດເລືອກຕັດລຳທີ່ມີໃບຍ່ອຍກຳລັງຈູມຍາວປະມານ 20 ຊມ .

- ຄວນຕັດຍອດໃກ້ຄຽງກັບໜໍ່ໃໝ່ທີ່ກຳລັງເກີດຂຶ້ນໃໝ່ ແລະ ສູງຈາກໜ້າດິນ 20 — 30 ຊມ.
- ຕັດຍອດໃນລະດູຝົນຈະໄດ້ໜໍ່ໃຫຍ່ ແລະ ໄດ້ປະລິມານຍອດອ່ອນຫຼາຍ.

## 5. ຜົນໄດ້ຮັບຈາກການປູກຫວາຍ

### 5.1 ຜົນໄດ້ຮັບຈາກການຕັດຍອດຫວາຍ

ຖ້າປະຕິບັດຕາມເຕັກນິກທີ່ໄດ້ແນະນຳ ຈະສາມາດຕັດຍອດໄດ້ຍາວນານເຖິງ 20 — 40 ປີ ແລະ ຈາກການລົງທຶນພຽງຄັ້ງດຽວ ແຕ່ເກັບລາຍຮັບໄດ້ດົນ ແລະ ຫຼາຍ ຖ້າທຽບໃສ່ການປູກພືດຊະນິດອື່ນໆໃນເນື້ອທີ່ດິນທີ່ປູກເຂົ້າບໍ່ໄດ້. ຫວາຍນ້ຳເຜີ້ງຈະທົນທານຕໍ່ນ້ຳຖ້ວມ. ຖ້າມີນ້ຳຖ້ວມຕົ້ນຫວາຍປະເພດນີ້ຈະງາມກວ່າປົກກະຕິ. ຍອດຫວາຍທີ່ມີໃນທ້ອງຕະຫຼາດປັດຈຸບັນນີ້ຍັງບໍ່ທັນພຽງພໍກັບຄວາມຕ້ອງການຂອງຜູ້ບໍລິໂພກ.




### 5.2 ຜົນໄດ້ຮັບຈາກການຕັດເສັ້ນຫວາຍ

ຫວາຍນ້ຳເຜີ້ງຈະເປັນຫວາຍທີ່ໃຫຍ່ ແລະ ສາມາດຕັດຍອດ ແລະ ເສັ້ນໄດ້ຍ້ອນວ່າເສັ້ນຫວາຍຊະນິດນີ້ ມີຄຸນນະພາບທີ່ດີ ແລະຄົນນິຍົມນຳໃຊ້. ພາຍຫຼັງທີ່ປູກໄດ້ 5 ປີ ຈະສາມາດຕັດເສັ້ນຫວາຍໄດ້ ແລະ ຖ້າຫາກມີຕົ້ນໄມ້ໃຫ້ຫວາຍປີນປ່າຍຂຶ້ນຈະດີ.




WWF

ໂທ: 021 216080

ຂໍ້ມູນເຕັກນິກຕິດຕໍ່

ທ່ານ ຄຳພອນ ແສງດາລາ

ໂທ: 020 6861101

LEAP

ໂທ: 021 740253

ຫຼື 021 740252

SUFORD

ໂທ: 021 740544

ຫຼື 021 740543

**ພາຍໃຕ້ການຮ່ວມມື :**

ສະຖາບັນຄົ້ນຄວ້າ ເຕັກນິກ—ວິທະຍາສາດ ກະສິກຳ ແລະ ປ່າໄມ້,

ກອງສົ່ງເສີມກະສິກຳ ແລະ ປ່າໄມ້

**ສະໜັບສະໜູນໂດຍ:**

ໂຄງການ ສົ່ງເສີມ ກະສິກຳ **(LEAP),**

ກອງທຶນອະນຸລັກທຳມະຊາດໂລກ **(WWF) & (SUFORD)**

ສູນຂໍ້ມູນຂ່າວສານການສົ່ງເສີມ

# ເຕັກນິກການປູກ ຫວາຍນ້ຳເຜີ້ງ

## *Calamus siamensis Becc.*



NAFRI

ກ.ສ.ກ.ປ NAFES